ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ສຳນັກງານນາຍົກລັດຖະມົນຕີ

ເລກທີ 013 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 08.01.2010

# ດຳລັດ

## ວ່າດ້ວຍ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ

- ອີງຕາມກົດໝາຍວ່າດ້ວຍ ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບ ເລກທີ 02 / ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ໜັງສືສະເໜີຂອງ ລັດຖະມົນຕີວ່າການ ກະຊວງການຕ່າງປະເທດ ສະບັບເລກທີ 04101 / ຕປທ.ຈສກ.3, ລົງວັນທີ 23 ກໍລະກົດ 2009.

ນາຍົກລັດຖະມົນຕີ ອອກດຳລັດ :

## ໝວດທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການກ່ຽວກັບການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແນໃສ່ອຳນວຍຄວາມສະດວກໃຫ້ອົງການດັ່ງກ່າວ ເຄື່ອນໄຫວວຽກງານຢ່າງມີປະສິດທິຜົນ, ປະກອບສ່ວນເຂົ້າໃນການປະຕິບັດແຜນ ພັດທະນາເສດຖະກິດ-ສັງຄົມ ແລະ ລຶບລ້າງຄວາມທຸກຍາກ ຢູ່ ສປປ ລາວ.

**ມາດຕາ 2. ນິຍາມ**

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີຊື່ຫຍໍ້ວ່າ "ອສບລ" ແລະ ເປັນພາສາອັງກິດ ຂຽນວ່າ International Non-Governmental Organizations ຂຽນຫຍໍ້ "INGO" ແມ່ນອົງການຈັດຕັ້ງສັງຄົມຂອງສາກົນ ຫຼື ຂອງຕ່າງປະເທດ ທີ່ ມີຖານະນິຕິບຸກຄົນ ໂດຍມີເປົ້າໝາຍຊ່ວຍເຫລືອ ໃນດ້ານການພັດທະນາ ແລະ ດ້ານມະນຸດສະທຳ ໂດຍບໍ່ສະແຫວງຫາຜົນກຳໄລ.

**ມາດຕາ 3. ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍດັ່ງນີ້:

3.1 ອະນຸມັດປະຕິບັດງານ ໝາຍເຖິງ ການຈົດທະບຽນ ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຕາມລະບຽບຫຼັກການ ຂອງດຳລັດສະບັບນີ້;

3.2 ອະນຸມັດໂຄງການ ໝາຍເຖິງການເຫັນດີ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານດຳເນີນການຈັດຕັ້ງປະຕິບັດ ໂຄງການຊ່ວຍເຫຼືອ ຢູ່ ສປປ ລາວ;

3.3 ອະນຸມັດເປີດຫ້ອງການໂຄງການ ໝາຍເຖິງການເຫັນດີ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເປີດຫ້ອງການໂຄງການຂອງຕົນ ຢູ່ ສປປລາວ ເພື່ອປະຕິບັດໂຄງການ;

3.4 ອະນຸມັດເປີດຫ້ອງການຜູ້ຕາງໜ້າ ໝາຍເຖິງການເຫັນດີ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເປີດຫ້ອງການຜູ້ຕາງໜ້າຂອງຕົນ ປະຈຳ ສປປລາວ ;

3.5 ອະນຸມັດເປີດຫ້ອງການຜູ້ຕາງໜ້າພາກພື້ນ ໝາຍເຖິງການເຫັນດີ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານເປີດຫ້ອງການຜູ້ຕາງໜ້າພາກພື້ນຂອງຕົນ ຢູ່ ສປປລາວ ເພື່ອອຳນວຍຄວາມສະດວກໃນການດຳເນີນວຽກງານຂອງຕົນ ໃນ ພາກພື້ນ ລວມທັງ ສປປລາວ;

3.6 ອະນຸມັດຮັບເອົາຜູ້ຕາງໜ້າ, ຫົວໜ້າໂຄງການ ແລະ ພະນັກງານ ຂອງ ອສບລ ໝາຍເຖິງການເຫັນດີໃຫ້ ຜູ້ຕາງໜ້າ, ຫົວໜ້າໂຄງການ ແລະ ພະນັກງານ ຂອງ ອສບລ ປະຕິບັດວຽກງານ ຢູ່ ສປປລາວ ຕາມບົດບາດ ແລະ ໜ້າທີ່ ຂອງຕົນທີ່ໄດ້ກຳນົດໄວ້;

3.7 ອະນຸມັດປະຕິບັດກິດຈະກຳ ໝາຍເຖິງການເຫັນດີ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຈັດຕັ້ງປະຕິບັດກິດຈະກຳໄລຍະສັ້ນ ທີ່ບໍ່ເປັນໂຄງການ.

**ມາດຕາ 4. ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ມີຜົນນຳໃຊ້ສຳລັບອົງການຈັດຕັ້ງສັງຄົມຂອງສາກົນ ແລະ ຂອງຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 2 ລວມທັງ ສະມາຄົມ, ມູນນິທິ, ກອງທຶນ, ສະຖາບັນ ແລະ ສະໂມສອນ ຂອງຕ່າງປະເທດ.

# ໝວດທີ II
# ຂັ້ນຕອນ ແລະ ເງື່ອນໄຂ ການຂໍອະນຸມັດ

**ມາດຕາ 5. ຂັ້ນຕອນການຂໍອະນຸມັດ**

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະເຂົ້າມາດຳເນີນກິດຈະກຳ ຊ່ວຍເຫລືອ ຢູ່ ສປປລາວ ຕ້ອງດຳເນີນຕາມຂັ້ນຕອນ ດັ່ງນີ້:

5.1 ຂໍອະນຸມັດປະຕິບັດງານ;

5.2 ຂໍອະນຸມັດປະຕິບັດໂຄງການ;

5.3 ຂໍອະນຸມັດເປີດຫ້ອງການ ຊຶ່ງມີປະເພດດັ່ງນີ້:

5.3.1 ຂໍອະນຸມັດເປີດຫ້ອງການໂຄງການ;

5.3.2 ຂໍອະນຸມັດເປີດຫ້ອງການຜູ້ຕາງໜ້າ;

5.3.3 ຂໍອະນຸມັດເປີດຫ້ອງການຜູ້ຕາງໜ້າພາກພື້ນ;

5.4 ຂໍອະນຸມັດຮັບເອົາ ຜູ້ຕາງໜ້າ, ຫົວໜ້າໂຄງການ ແລະ ພະນັກງານ;

5.5 ຂໍອະນຸມັດປະຕິບັດກິດຈະກຳ.

**ມາດຕາ 6. ການອະນຸມັດປະຕິບັດງານ**

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານທີ່ຈະໄດ້ຮັບອະນຸມັດປະຕິບັດງານ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

6.1 ມີຖານະນິຕິບຸກຄົນ, ໄດ້ຈົດທະບຽນຢ່າງຖືກຕ້ອງຕາມລະບຽບກົດໝາຍ ຂອງ ປະເທດຕົ້ນກຳເນີດ;

6.2 ເປັນອົງການຈັດຕັ້ງສາກົນທີ່ບໍ່ສະແຫວງຫາຜົນກຳໄລ;

6.3 ມີທຳມະນູນ ຫຼື ກົດລະບຽບ ທີ່ຊັດເຈນ;

6.4 ມີຖານະທາງດ້ານການເງິນທີ່ດີ ແລະ ມີແຫຼ່ງທຶນທີ່ຖືກຕ້ອງຕາມກົດໝາຍ;

6.5 ມີຈຸດປະສົງຊ່ວຍເຫຼືອ ສປປລາວ ດ້ານການພັດທະນາ ແລະ ດ້ານມະນຸດສະທຳ.

**ມາດຕາ 7. ການອະນຸມັດໂຄງການ**

ໂຄງການຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະໄດ້ຮັບການອະນຸມັດປະຕິບັດງານ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

7.1 ໄດ້ຮັບອະນຸມັດປະຕິບັດງານແລ້ວຕາມ ມາດຕາ 6 ຂອງດຳລັດສະບັບນີ້ ;

7.2 ໂຄງການຕ້ອງສອດຄ່ອງກັບ ແຜນງານ ແລະ ຈຸດສຸມບຸລິມະສິດ ທີ່ ລັດຖະບານອະນຸຍາດ;

7.3 ໂຄງການຕ້ອງມີເປົ້າໝາຍ, ມີກິດຈະກຳທີ່ຈະແຈ້ງ ແລະ ສອດຄ່ອງກັບ ແຜນຍຸດທະສາດການພັດທະນາ ຂອງ ສປປ ລາວ;

7.4 ໂຄງການ ຕ້ອງມີຄວາມເໝາະສົມທາງດ້ານງົບປະມານ;

7.5 ໂຄງການ ຕ້ອງກຳນົດຢ່າງຈະແຈ້ງ ໜ້າທີ່ ຂອງພາກສ່ວນກ່ຽວຂ້ອງ ຂອງລັດ ແລະ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ;

7.6 ໂຄງການ ຕ້ອງກຳນົດຢ່າງລະອຽດກ່ຽວກັບກິດຈະກຳທີ່ຈະເຮັດ ແລະ ຂື້ນງົບປະມານ ສຳລັບກິດຈະກຳແຕ່ລະອັນ ຢ່າງເໝາະສົມ;

7.7 ງົບປະມານສ່ວນໃຫຍ່ຂອງໂຄງການຕ້ອງສຸມໃສ່ກິດຈະກຳຂອງໂຄງການ ;

7.8 ໂຄງການຕ້ອງມີກົນໄກຄຸ້ມຄອງຂອງຕົນ ໂດຍມີການຈັດຕັ້ງຄະນະຊີ້ນຳໂຄງການ ແລະມີຜູ້ຕາງໜ້າຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ຜູ້ຕາງໜ້າຈາກອົງການ ຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເປັນສະມາຊິກ. ຄະນະຊີ້ນຳໂຄງການດັ່ງກ່າວ ມີໜ້າທີ່ຮັບຮອງເອົາແຜນປະຕິບັດວຽກງານລະອຽດ, ແຜນງົບປະມານຕົວຈິງ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດໂຄງການ.

## ມາດຕາ 8. ການອະນຸມັດເປີດຫ້ອງການໂຄງການ

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະໄດ້ຮັບການອະນຸມັດ ໃຫ້ເປີດຫ້ອງການໂຄງການ ຢູ່ ສປປລາວ ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

8.1 ໄດ້ຮັບອະນຸມັດໃຫ້ດຳເນີນການປະຕິບັດໂຄງການ ຢູ່ ສປປ ລາວ ;

8.2 ມີໃບອະນຸຍາດໃຫ້ນຳໃຊ້ສະຖານທີ່ ຈາກເຈົ້າຂອງສະຖານທີ່ ໂດຍມີການຮັບຮູ້ຈາກ ອົງການປົກຄອງທີ່ກ່ຽວຂ້ອງ ເພື່ອເປີດຫ້ອງການ;

8.3 ຫ້ອງການໂຄງການ ຕ້ອງມີອາຍຸການ ເທົ່າກັບອາຍຸການຂອງໂຄງການທີ່ໄດ້ຮັບການອະນຸມັດແລ້ວ ແລະ ຕ້ອງປິດລົງພາຍໃນ 30 ວັນ ພາຍຫລັງ ການປະຕິບັດ ໂຄງການ ສິ້ນສຸດລົງ.

## ມາດຕາ 9. ການອະນຸມັດເປີດຫ້ອງການຜູ້ຕາງໜ້າ

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະໄດ້ຮັບອະນຸມັດໃຫ້ເປີດ ຫ້ອງການຜູ້ຕາງໜ້າ ຢູ່ ສປປ ລາວ ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

9.1 ໄດ້ປະຕິບັດໂຄງການຊ່ວຍເຫລືອດ້ານການພັດທະນາ ຢ່າງມີປະສິດທິຜົນ ຢູ່ ສປປລາວ ມາແລ້ວ ຢ່າງນ້ອຍ 5 ປີ ໃນມູນຄ່າຢ່າງຕ່ຳສຸດ ປີລະ 500.000 (ຫ້າແສນ) ໂດລາສະຫະລັດ;

9.2 ມີໃບອະນຸຍາດໃຫ້ນຳໃຊ້ສະຖານທີ່ ຈາກເຈົ້າຂອງສະຖານທີ່ ໂດຍມີການຮັບຮູ້ ຈາກອົງການປົກຄອງທີ່ກ່ຽວຂ້ອງ ເພື່ອເປີດຫ້ອງການ;

9.3 ກຳນົດຢ່າງຈະແຈ້ງ ກ່ຽວກັບພາລະບົດບາດ, ໜ້າທີ່ ແລະ ໂຄງຮ່າງການຈັດຕັ້ງຂອງຫ້ອງການ.

## ມາດຕາ 10. ການອະນຸມັດເປີດຫ້ອງການຜູ້ຕາງໜ້າພາກພື້ນ

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະໄດ້ຮັບອະນຸມັດໃຫ້ເປີດ ຫ້ອງການຜູ້ຕາງໜ້າພາກພື້ນ ຢູ່ ສປປລາວ ຕ້ອງມີເງື່ອນໄຂດັ່ງຕໍ່ໄປນີ້:

10.1 ມີຫ້ອງການຜູ້ຕາງໜ້າ ຢູ່ ສປປລາວ;

10.2 ມີໃບອະນຸຍາດໃຫ້ນຳໃຊ້ສະຖານທີ່ ຈາກເຈົ້າຂອງສະຖານທີ່ ໂດຍມີການຮັບຮູ້ ຈາກອົງການປົກຄອງທີ່ກ່ຽວຂ້ອງ ເພື່ອເປີດຫ້ອງການ;

10.3 ກຳນົດຢ່າງຈະແຈ້ງ ພາລະບົດບາດ, ໜ້າທີ່ ແລະ ໂຄງຮ່າງການຈັດຕັ້ງຂອງຫ້ອງການ ;

10.4 ມູນຄ່າການຊ່ວຍເຫຼືອ ສປປລາວ ສູງກວ່າມູນຄ່າການຊ່ວຍເຫຼືອ ບັນດາປະເທດໃນພາກພື້ນ;

10.5 ມີແຜນການ ເພີ່ມການຊ່ວຍເຫຼືອຢູ່ ສປປລາວ.

**ມາດຕາ 11. ການອະນຸມັດຮັບເອົາຜູ້ຕາງໜ້າອົງການ, ຫົວໜ້າໂຄງການ ແລະ ພະນັກງານ ອສບລ**

ຜູ້ຕາງໜ້າອົງການ, ຫົວໜ້າໂຄງການ ແລະ ພະນັກງານ ອສບລ ຈະໄດ້ຮັບອະນຸມັດບົນພື້ນຖານເງື່ອນໄຂດັ່ງນີ້:

11.1 ມີໂຄງການຊ່ວຍເຫຼືອ ທີ່ໄດ້ຮັບການອະນຸມັດ ຢູ່ ສປປລາວ;

11.2 ມີ ຫ້ອງການຜູ້ຕາງໜ້າ ຫຼື ຫ້ອງການໂຄງການ ຢູ່ ສປປ ລາວ;

11.3 ມີວິຊາສະເພາະ ແລະ ປະສົບການຕາມເງື່ອນໄຂ ແລະ ຕຳແໜ່ງງານ ທີ່ກຳນົດໄວ້ ໃນລະບຽບຂອງຫ້ອງການ ແລະ ການປະຕິບັດໂຄງການ;

11.4 ກຳນົດໄລຍະເວລາ ປະຕິບັດໜ້າທີ່ຢູ່ ສປປລາວ ຢ່າງຈະແຈ້ງ;

11.5 ສຳລັບພະນັກງານຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະເຂົ້າມາປະຈຳຢູ່ຫ້ອງການພາກພື້ນ ຕ້ອງມີໜັງສືຢັ້ງຢືນຮັບເອົາຜູ້ກ່ຽວ ຈາກປະເທດທີ່ຜູ້ກ່ຽວຈະເຂົ້າໄປເຄື່ອນໄຫວ ຕາມລະບຽບກົດໝາຍຂອງປະເທດດັ່ງກ່າວ. ສຳລັບພະນັກງານທ້ອງຖິ່ນຄົນລາວ ຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງຂອງ ສປປລາວ.

**ມາດຕາ 12. ການອະນຸມັດປະຕິບັດກິດຈະກຳ**

ກິດຈະກຳ ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ຈະໄດ້ຮັບການອະນຸມັດໃຫ້ປະຕິບັດໄດ້ ຕ້ອງມີເງື່ອນໄຂດັ່ງນີ້ :

12.1 ມີຄວາມເໝາະສົມ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ;

12.2 ກຳນົດຂັ້ນຕອນການຈັດຕັ້ງປະຕິບັດ ຢ່າງລະອຽດ;

12.3 ກຳນົດຂະແໜງການ ທີ່ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ;

12.4 ກຳນົດສະຖານທີ່ ແລະ ອຸປະກອນຮັບໃຊ້ ໃນການຈັດຕັ້ງປະຕິບັດ;

12.5 ກຳນົດງົບປະມານ ແລະ ແຫລ່ງທຶນທີ່ຈະນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດກິດຈະກຳດັ່ງກ່າວ;

12.6 ໄດ້ຮັບອະນຸມັດ ຈາກ ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 13 ການຂຶ້ນທະບຽນພາຫະນະ**

ພາຫະນະ ທີ່ຢູ່ໃນການຄຸ້ມຄອງ ແລະ ນຳໃຊ້ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ຖືກນຳເຂົ້າມາຢ່າງຖືກຕ້ອງ ຕາມລະບຽບກົດໝາຍຂອງ ສປປລາວ ສາມາດສະເໜີຂຶ້ນທະບຽນ ຕາມລະບຽບກົດໝາຍ ຂອງ ສປປລາວ ບົນພື້ນຖານເງື່ອນໄຂ ດັ່ງນີ້:

13.1 ມີເອກະສານຊື້ຂາຍຖືກຕ້ອງຕາມກົດໝາຍ;

13.2 ກໍານົດລະອຽດຈຸດປະສົງຂອງການນໍາໃຊ້ພາຫະນະດັ່ງກ່າວ ເຂົ້າໃນວຽກງານທີ່ກ່ຽວຂ້ອງຂອງອົງການ;

13.3 ແຈ້ງທີ່ມາຂອງງົບປະມານ ໃນການຊື້ພາຫະນະດັ່ງກ່າວ;

13.4 ນອກຈາກເງື່ອນໄຂທີ່ໄດ້ລະບຸໄວ້ໃນດໍາລັດສະບັບນີ້ ຍັງຕ້ອງປະຕິບັດຕາມເງື່ອນໄຂອື່ນ ທີ່ລະບຸໄວ້ໃນລະບຽບກົດໝາຍ ທີ່ກ່ຽວຂ້ອງ ຂອງ ສປປລາວ.

## ມາດຕາ 14. ການຕໍ່ອາຍຸ ແລະ ການດັດແກ້ ການອະນຸມັດ

ການຕໍ່ອາຍຸ ຫຼື ການດັດແກ້ການອະນຸມັດຕ່າງໆທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງດໍາລັດສະບັບນີ້ ຕ້ອງມີເຫດຜົນຈະແຈ້ງ ແລະ ມີຄໍາເຫັນຈາກພາກສ່ວນກ່ຽວຂ້ອງ ທີ່ເປັນຄູ່ຮ່ວມງານ ເປັນຜູ້ຢັ້ງຢືນ ຕາມກໍລະນີດັ່ງຕໍ່ໄປນີ້:

14.1 ການຕໍ່ອາຍຸອະນຸມັດປະຕິບັດງານ

ການຕໍ່ອາຍຸອະນຸມັດປະຕິບັດງານຕ້ອງມີເຫດຜົນຈະແຈ້ງ ແລະ ມີຄໍາເຫັນ ຈາກພາກສ່ວນກ່ຽວຂ້ອງ ທີ່ເປັນຄູ່ຮ່ວມງານເປັນຜູ້ຢັ້ງຢືນ.

14.2 ການຕໍ່ທະບຽນຍານພາຫະນະ

ການຕໍ່ທະບຽນຍານພາຫະນະຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຕ້ອງດໍາເນີນຕາມເງື່ອນໄຂດັ່ງນີ້ :

14.2.1 ພາຫະນະຕ້ອງຢູ່ໃນ ການຄຸ້ມຄອງ ແລະ ນໍາໃຊ້ ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຢູ່ ຫ້ອງການ ຫຼື ໂຄງການ ໂດຍມີຄໍາຊີ້ແຈງກ່ຽວກັບທີ່ມາ ແລະ ຈຸດປະສົງ ຂອງການສືບຕໍ່ນໍາໃຊ້;

14.2.2 ຕ້ອງມີຄໍາເຫັນຈາກພາກສ່ວນທີ່ກ່ຽວຂ້ອງ ທີ່ເປັນຄູ່ຮ່ວມງານເປັນ ຜູ້ຢັ້ງຢືນ ພາຫະນະນໍາເຂົ້າມາໃນຂອບຂອງໂຄງການ.

14.3 ການດັດແກ້ເອກະສານ ຫຼື ບົດບັນທຶກຄວາມເຂົ້າໃຈຂອງໂຄງການ

ການດັດແກ້ເອກະສານ ຫຼື ບົດບັນທຶກຄວາມເຂົ້າໃຈຂອງໂຄງການ ຕ້ອງມີເຫດຜົນຈະແຈ້ງ ແລະ ມີຄໍາເຫັນຈາກພາກສ່ວນກ່ຽວຂ້ອງ ທີ່ເປັນຄູ່ຮ່ວມງານເປັນຜູ້ຢັ້ງຢືນ.

14.4 ການປ່ຽນ ຫຼື ຕໍ່ອາຍຸການປະຕິບັດງານຂອງ ຜູ້ຕາງໜ້າ, ຫົວໜ້າໂຄງການ ແລະ ພະນັກງານ ເພື່ອປ່ຽນ ຫຼື ຕໍ່ອາຍຸປະຕິບັດງານ ຂອງ ພະນັກງານ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຕ້ອງຍື່ນໜັງສືສະເໜີ ພ້ອມທັງ ໃບປະເມີນຜົນ ຂອງການປະຕິບັດວຽກງານຂອງຜູ້ກ່ຽວຢັ້ງຢືນ ຈາກພາກສ່ວນກ່ຽວຂ້ອງ ທີ່ເປັນຄູ່ຮ່ວມງານຂອງຜູ້ກ່ຽວ.

ມາດຕາ 15. ການຢຸດຕິການເຄື່ອນໄຫວ

ການເຄື່ອນໄຫວວຽກງານຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຈະຖືກຢຸດຕິລົງ ໃນກໍລະນີ ດັ່ງນີ້:

15.1 ໃບອະນຸມັດປະຕິບັດງານໝົດອາຍຸ;

15.2 ໂຄງການຊ່ວຍເຫລືອ ສິ້ນສຸດລົງ;

15.3 ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີຄວາມປະສົງທີ່ຈະຢຸດຕິ;

15.4 ມີຄຳຕົກລົງຖອນໃບອະນຸມັດ ຈາກລັດຖະບານ.

ມາດຕາ 16. ການດຳເນີນການຂໍອະນຸມັດ

ການຂໍອະນຸມັດຕາມທີ່ໄດ້ກຳນົດໄວ້ ແຕ່ ມາດຕາ 5 ເຖິງ ມາດຕາ 15 ຂອງດຳລັດສະບັບນີ້ ໃຫ້ດຳເນີນຜ່ານ ກະຊວງການຕ່າງປະເທດ ພຽງບ່ອນດຽວ.'

## ໝວດທີ III
## ສິດ ແລະ ພັນທະ ຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ

ມາດຕາ 17. ສິດຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ໄດ້ຮັບການອະນຸມັດ ຈາກລັດຖະບານຕາມຂັ້ນຕອນ ທີ່ໄດ້ລະບຸໄວ້ໃນ ມາດຕາ 5 ຂອງດຳລັດສະບັບນີ້ ມີສິດ ດັ່ງນີ້:

17.1 ເມື່ອໄດ້ຮັບອະນຸມັດປະຕິບັດງານ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີສິດດັ່ງນີ້:

17.1.1 ພົວພັນ ແລະ ປຶກສາຫາລື ກັບອົງການຈັດຕັ້ງທີ່ກ່ຽວຂ້ອງຂອງ ສປປລາວ ເພື່ອເກັບກຳຂໍ້ມູນ ແລະ ກະກຽມຮ່ວມກັບພາກສ່ວນກ່ຽວຂ້ອງຂອງຝ່າຍລາວ ຮ່າງບົດສະເໜີໂຄງການ ແລະ ຮ່າງບົດບັນທຶກຄວາມເຂົ້າໃຈ ທີ່ຈະນຳສະເໜີຂໍອະນຸມັດຈາກລັດຖະບານ;

17.1.2 ສະເໜີຂໍອະນຸມັດແຕ່ງຕັ້ງ ພະນັກງານທ້ອງຖິ່ນ ຫຼື ຕ່າງປະເທດ ເພື່ອເປັນຕົວແທນຂອງອົງການ ຮ່ວມກັບພາກສ່ວນກ່ຽວຂ້ອງຂອງຝ່າຍລາວ ໃນການກະກຽມປຶກສາຫາລື, ເກັບກຳຂໍ້ມູນ ແລະ ຮ່າງເອກະສານຕ່າງໆ ເພື່ອຂໍອະນຸມັດຈາກ ລັດຖະບານ.

17.2 ເມື່ອໄດ້ຮັບອະນຸມັດປະຕິບັດໂຄງການ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີສິດດັ່ງນີ້ :

17.2.1 ສະເໜີ ຂໍອະນຸມັດ ຮັບເອົາພະນັກງານທ້ອງຖິ່ນ ຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ຂອງ ສປປລາວ ຫຼື ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດໂຄງການ ຕາມຈຳນວນທີ່ໄດ້ລະບຸໄວ້ໃນ ບົດບັນທຶກຄວາມເຂົ້າໃຈ ທີ່ໄດ້ເຊັນຮ່ວມກັບຂະແໜງການກ່ຽວຂ້ອງຂອງຝ່າຍລາວ;

17.2.2 ສາມາດດຳເນີນກິດຈະກຳຕ່າງໆ ຮ່ວມກັບຂະແໜງການກ່ຽວຂ້ອງຂອງຝ່າຍລາວ ຢູ່ເຂດເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນບົດບັນທຶກຄວາມເຂົ້າໃຈຂອງໂຄງການ ຊຶ່ງໄດ້ຮັບການອະນຸມັດຈາກ ລັດຖະບານ ;

17.2.3 ສະເໜີນຳເຂົ້າ ແລະ ຍົກເວັ້ນພາສີນຳເຂົ້າອຸປະກອນຕ່າງໆ ທີ່ກຳນົດໃນບົດບັນທຶກຄວາມເຂົ້າໃຈ ຕາມລະບຽບກົດໝາຍ ຂອງ ສປປລາວ ເພື່ອນຳໃຊ້ໃນການຈັດຕັ້ງປະຕິບັດໂຄງການ;

17.2.4 ສະເໜີຂໍເປີດຫ້ອງການໂຄງການ, ເຊົ່າຫ້ອງການ, ເຊົ່າທີ່ພັກ ຕາມລະບຽບກົດໝາຍ ຂອງ ສປປ ລາວ;

17.2.5 ສະເໜີ ຂໍອະນຸມັດ ເຮັດຕາປະທັບຂອງອົງການ ໂດຍມີຮູບແບບ ທີ່ ສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ.

17.3 ເມື່ອໄດ້ຮັບອະນຸມັດເປີດຫ້ອງການຜູ້ຕາງໜ້າ ແລະ ຫ້ອງການພາກພື້ນ, ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີສິດດັ່ງລຸ່ມນີ້ :

17.3.1 ສິດທີ່ໄດ້ລະບຸໄວ້ໃນ ມາດຕາ 17 ວັກ 17.2 ;

17.3.2 ສະເໜີຂໍແຕ່ງຕັ້ງຜູ້ຕາງໜ້າຂອງຕົນ ;

17.3.3 ໄດ້ຮັບການຍົກເວັ້ນພາສີນຳເຂົ້າ ອຸປະກອນ, ຍານພະຫະນະຮັບໃຊ້ຂອງ ຫ້ອງການ ຕາມລະບຽບຫລັກການ ແລະ ກົດໝາຍ ຂອງ ສປປ ລາວ.

17.4 ເຈົ້າໜ້າທີ່ ແລະ ພະນັກງານຕ່າງປະເທດຂອງ ອສບລ ມີສິດດັ່ງນີ້ :

17.4.1 ສະເໜີ ເອົາຄູ່ສົມລົດ ແລະ ລູກທີ່ມີອາຍຸ ຕ່ຳກວ່າ 18 ປີ ຕາມລະບຽບກົດໝາຍ ຂອງ ສປປ ລາວ, ເຂົ້າມາຢູ່ ສປປ ລາວ ຕາມກຳນົດເວລາທີ່ຜູ້ກ່ຽວໄດ້ຮັບອະນຸມັດ;

17.4.2 ສະເໜີຂໍ ເຮັດບັດປະຈຳຕົວສຳລັບຊ່ຽວຊານຕ່າງປະເທດ ແລະ ວີຊາເຂົ້າອອກຫຼາຍເທື່ອ ຕາມລະບຽບກົດໝາຍ ຂອງ ສປປ ລາວ;

17.4.3 ຄູ່ສົມລົດຂອງພະນັກງານຕ່າງປະເທດ ຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີສິດເຮັດວຽກຕາມການອະນຸມັດ, ແຕ່ວຽກດັ່ງກ່າວ ຕ້ອງບໍ່ພົວພັນ ແລະ ມີສ່ວນກ່ຽວຂ້ອງກັບວຽກງານຂອງຄູ່ສົມລົດຂອງຕົນທີ່ເຮັດວຽກ ໃຫ້ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

17.5 ເມື່ອໄດ້ຮັບອະນຸມັດກິດຈະກຳ, ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ມີສິດດັ່ງນີ້ :

17.5.1 ດຳເນີນກິດຈະກຳ ຕາມທີ່ລັດຖະບານ ອະນຸມັດໃຫ້ ;

17.5.2 ສະເໜີນຳເຂົ້າເຄື່ອງຊ່ວຍເຫຼືອ ຕາມລະບຽບກົດໝາຍ ຂອງ ສປປ ລາວ.

## ມາດຕາ 18. ພັນທະຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ພະນັກງານ ແລະ ຄອບຄົວຂອງ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ, ພະນັກງານ ແລະ ຄອບຄົວຂອງ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ທີ່ເຂົ້າມາປະຕິບັດວຽກງານ ຢູ່ ສປປ ລາວ ມີພັນທະດັ່ງນີ້:

18.1 ເຄົາລົບນັບຖື ແລະ ປະຕິບັດຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງ ສປປລາວ;

18.2 ຮັບຜິດຊອບທຸກການເຄື່ອນໄຫວຂອງຕົນ ຕາມລະບຽບກົດໝາຍຂອງ ສປປ ລາວ;

18.3 ປະຕິບັດໂຄງການ ຕາມທີ່ໄດ້ລະບຸໄວ້ໃນບົດບັນທຶກຄວາມເຂົ້າໃຈ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງ ຂອງຝ່າຍລາວ ຢ່າງເຂັ້ມງວດ;

18.4 ເຮັດບົດລາຍງານການເຄື່ອນໄຫວຂອງຕົນໃຫ້ພາກສ່ວນກ່ຽວຂ້ອງ ຂອງຝ່າຍລາວ ຢ່າງເປັນປົກກະຕິ ຫຼື ຢ່າງໜ້ອຍ ປີລະໜຶ່ງຄັ້ງ;

18.5 ເປີດເຜີຍບັນຊີການເງິນຂອງຕົນ ລວມທັງບົດລາຍງານການຈັດຕັ້ງປະຕິບັດໂຄງການ ແລະ ບົດລາຍງານການເງິນ ທີ່ອົງການ ຈະສົ່ງໃຫ້ຜູ້ໃຫ້ທຶນ;

18.6 ຈັດຕັ້ງການຕິດຕາມກວດກາ, ສະຫຼຸບບັນຊີ ແລະ ປະເມີນຜົນ ໄລຍະກາງ ແລະ ໄລຍະທ້າຍໂຄງການ ຮ່ວມກັບ ຂະແໜງການທີ່ກ່ຽວຂ້ອງຂອງຝ່າຍລາວ;

18.7 ສົ່ງບົດລາຍງານ ກ່ຽວກັບຜົນຂອງການຈັດຕັ້ງປະຕິບັດໂຄງການດັ່ງກ່າວ ຫລັງຈາກໂຄງການທີ່ໄດ້ຖືກອະນຸມັດ ສິ້ນສຸດລົງ ແລະ ເຮັດໜັງສືມອບຮັບໂຄງການໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງຂອງ ຝ່າຍລາວ ແລ້ວສົ່ງໃຫ້ ກະຊວງການຕ່າງປະເທດ ພາຍໃນ 30 ວັນ ;

18.8 ສະໜອງຂໍ້ມູນກ່ຽວກັບໂຄງຮ່າງການຈັດຕັ້ງຂອງອົງການ, ທີ່ຕັ້ງຂອງຫ້ອງການ, ຍານພະຫະນະທີ່ອົງການຄຸ້ມຄອງ ທຸກຄັ້ງທີ່ມີການປ່ຽນແປງ;

18.9 ແຈ້ງລາຍຊື່ພະນັກງານທັງ ຄົນລາວ ແລະ ຕ່າງປະເທດ ທີ່ປະຕິບັດໜ້າທີ່ ພາຍໃຕ້ການຄຸ້ມຄອງຂອງອົງການ ທຸກຄັ້ງທີ່ມີການປ່ຽນແປງ ໃຫ້ແກ່ ກອງເລຂາຄະນະກຳມາການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ.

# ໝວດທີ IV
# ການຄຸ້ມຄອງ

**ມາດຕາ 19. ການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ**

ລັດຖະບານ ສ້າງຕັ້ງ ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ເພື່ອຄຸ້ມຄອງ ແລະ ອຳນວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ດັ່ງນີ້ :

19.1 ຢູ່ສູນກາງ ມີຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ແລະ ມີກອງເລຂາຄະນະກຳມະການ ຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ;

19.2 ຢູ່ທ້ອງຖິ່ນ ມີຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຂັ້ນທ້ອງຖິ່ນ.

**ມາດຕາ 20. ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ**

ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ສ້າງຕັ້ງຂຶ້ນພາຍໃຕ້ ການຊີ້ນຳ ຂອງ ລັດຖະມົນຕີວ່າການກະຊວງການຕ່າງປະເທດ ຊຶ່ງປະກອບດ້ວຍ:

1. ລັດຖະມົນຕີຊ່ວຍວ່າການ ກະຊວງການຕ່າງປະເທດ, ເປັນປະທານ;
2. ຫົວໜ້າກົມອົງການຈັດຕັ້ງສາກົນ, ກະຊວງການຕ່າງປະເທດ ເປັນຫົວໜ້າກອງເລຂາ ;
3. ຫົວໜ້າກົມແຜນການ ສັງລວມ, ກະຊວງແຜນການ ແລະ ການລົງທຶນ;
4. ຜູ້ຕາງໜ້າຄະນະຊີ້ນຳ ພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ແຫ່ງຊາດ;
5. ຜູ້ຕາງໜ້າກະຊວງສຶກສາທິການ;
6. ຜູ້ຕາງໜ້າກະຊວງສາທາລະນະສຸກ;
7. ຜູ້ຕາງໜ້າກະຊວງກະສິກຳ ແລະ ປ່າໄມ້;
8. ຜູ້ຕາງໜ້າກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
9. ຜູ້ຕາງໜ້າສູນກາງ ສະຫະພັນແມ່ຍິງລາວ;
10. ຜູ້ຕາງໜ້າສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ;
11. ຜູ້ຕາງໜ້າສູນກາງແນວລາວສ້າງຊາດ;
12. ຜູ້ຕາງໜ້າກະຊວງປ້ອງກັນຄວາມສະຫງົບ;
13. ປະທານຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂອງແຂວງ ແລະ ນະຄອນ.

**ມາດຕາ 21. ພາລະບົດບາດ ຂອງຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ**

ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ມີພາລະບົດບາດ ໃນການກຳນົດແນວທາງ ແລະ ຍຸດທະສາດການຮ່ວມມືກັບ ອົງການຈັດຕັ້ງສາກົນ

ທີ່ບໍ່ສັງກັດລັດຖະບານ, ຊີ້ນໍາ ແລະ ຕິດຕາມ ການຈັດຕັ້ງປະຕິບັດວຽກງານການຮ່ວມມື ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ,

**ມາດຕາ 22. ກອງເລຂາຄະນະກໍາມະການຄຸ້ມຄອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດ ລັດຖະບານ**

ກົມອົງການຈັດຕັ້ງສາກົນ ຂອງ ກະຊວງການຕ່າງປະເທດ ເຮັດໜ້າທີ່ເປັນກອງເລຂາ ຄະນະກໍາມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໂດຍແມ່ນ ຫົວໜ້າ ກົມອົງການຈັດຕັ້ງສາກົນ ເປັນຫົວໜ້າກອງເລຂາ.

**ມາດຕາ 23. ພາລະບົດບາດ ຂອງ ກອງເລຂາຄະນະກໍາມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດ ລັດຖະບານ**

ກອງເລຂາຄະນະກໍາມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ເປັນ ເສນາທິການໃຫ້ແກ່ ຄະນະກໍາມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ໃນການປະຕິບັດພາລະບົດບາດ ຂອງຕົນ, ຄົ້ນຄວ້າ ແລະ ນໍາສະເໜີ ໂຄງການຮ່ວມມື ລະອຽດ ຕໍ່ປະທານຄະນະຊີ້ນໍາ ເພື່ອພິຈາລະນາ ແລະ ຮັບຮອງເອົາ; ເປັນເຈົ້າການ ໃນການ ຕິດຕາມ, ຄຸ້ມຄອງ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຕ່າງໆ ໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ຂະແໜງການ ແລະ ທ້ອງຖິ່ນ; ສະຫຼຸບສັງລວມ, ຕີລາຄາຜົນຂອງ ການຮ່ວມມື ກັບອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ; ຂົນຂວາຍທຶນ ເພື່ອຈັດຕັ້ງ ປະຕິບັດໂຄງການຊ່ວຍເຫຼືອ ດ້ານຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນ ; ຄົ້ນຄວ້ານໍາສະເໜີ ເພື່ອພິຈະນະນາ ອະນຸມັດຕ່າງໆ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 5 ເຖິງ ມາດຕາ 15 ຂອງ ດໍາລັດສະບັບນີ້.

**ມາດຕາ 24. ຄະນະກໍາມະການຄຸ້ມຄອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດ ຖະບານຂັ້ນທ້ອງຖິ່ນ**

ຄະນະກໍາມະການຄຸ້ມຄອງ ອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ ຂັ້ນທ້ອງຖິ່ນ ສ້າງຕັ້ງຂຶ້ນຢູ່ ແຂວງ, ນະຄອນ ຊຶ່ງປະກອບດ້ວຍ :

1. ຮອງເຈົ້າແຂວງ ຫຼື ຮອງເຈົ້າຄອງນະຄອນ, ເປັນປະທານ ;
2. ຫົວໜ້າພະແນກພົວພັນຕ່າງປະເທດ;
3. ຜູ້ຕາງໜ້າຈາກ ຂະແໜງການກ່ຽວຂ້ອງຂອງແຂວງ, ນະຄອນ;
4. ເຈົ້າເມືອງ.

**ມາດຕາ 25. ພາລະບົດບາດ ຂອງຄະນະກໍາມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຂັ້ນທ້ອງຖິ່ນ**

ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຂັ້ນທ້ອງຖິ່ນ ມີພາລະບົດບາດຊ່ວຍຄະນະກຳມະການຄຸ້ມຄອງ ອສບລ ຢູ່ສູນກາງ ໃນການປະສານງານ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດທຸກໂຄງການລະອຽດ ລວມທັງຄຸ້ມຄອງຊ່ຽວຊານຕ່າງປະເທດຂອງອົງການ ອສບລ ຢູ່ທ້ອງຖິ່ນ; ແລະ ນຳສະເໜີໂຄງການເພື່ອຂໍອະນຸມັດ; ປະເມີນຜົນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດໂຄງການ ຕໍ່ຄະນະກຳມະການຄຸ້ມຄອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຂັ້ນສູນກາງ.

**ມາດຕາ 26. ການຕິດຕາມ, ກວດກາ ແລະ ປະເມີນຜົນ**

ມອບສິດໃຫ້ ກະຊວງການຕ່າງປະເທດ ສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ ເປັນເຈົ້າການ ຕິດຕາມ, ກວດກາ, ປະເມີນຜົນ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຕ່າງໆ ຂອງ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ທີ່ໄດ້ຮັບອະນຸມັດ ໃຫ້ມີປະສິດທິຜົນ ແລະ ສອດຄ່ອງກັບ ລະບຽບກົດໝາຍ ຂອງ ສປປ ລາວ.

**ມາດຕາ 27. ການອອກຂໍ້ແນະນຳກ່ຽວກັບການຈັດຕັ້ງປະຕິບັດ**

ມອບສິດໃຫ້ ກະຊວງການຕ່າງປະເທດ ອອກຂໍ້ແນະນຳກ່ຽວກັບການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ແລະ ເປັນໃຈກາງປະສານງານ ກັບຂະແໜງການກ່ຽວຂ້ອງທັງ ສູນກາງ ແລະ ທ້ອງຖິ່ນ ເພື່ອຄຸ້ມຄອງການຈັດຕັ້ງປະຕິບັດໂຄງການຊ່ວຍເຫຼືອຂອງອົງການຈັດຕັ້ງສາກົນ ທີ່ບໍ່ສັງກັດລັດຖະບານ.

## ໝວດທີ V
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 28. ນະໂຍບາຍຕໍ່ຜູ້ມີຜົນງານ**

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ພະນັກງານຂອງອົງການທີ່ມີຜົນງານດີເດັ່ນໃນການປະຕິບັດໂຄງການຊ່ວຍເຫຼືອ ຈະໄດ້ຮັບການຍ້ອງຍໍ ຕາມຜົນງານ ແລະ ນະໂຍບາຍການຍ້ອງຍໍ ຂອງ ສປປລາວ.

**ມາດຕາ 29. ມາດຕະການຕໍ່ຜູ້ລະເມີດ**

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ພະນັກງານຂອງອົງການ ທີ່ດຳເນີນການເຄື່ອນໄຫວ ທີ່ລະເມີດຂໍ້ກຳນົດຂອງດຳລັດສະບັບນີ້ ຈະຖືກຕັກເຕືອນ, ຖອດຖອນການອະນຸມັດປະຕິບັດໂຄງການ ຫລື ຍົກເລີກໂຄງການ ຕາມກໍລະນີ ເບົາ ຫລື ໜັກ.

ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ແລະ ພະນັກງານຂອງອົງການ ທີ່ເຄື່ອນໄຫວບໍ່ສອດຄ່ອງກັບ ແນວທາງນະໂຍບາຍ, ລະເມີດລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງ ສປປ ລາວ ຈະຖືກດຳເນີນຄະດີ ຕາມລະບຽບກົດຫມາຍ ຂອງ ສປປ ລາວ.

## ໝວດທີ VI
## ບົດບັນຍັດສຸດທ້າຍ

### ມາດຕາ 30. ການປະສານງານໃນຂອບເຂດທົ່ວປະເທດ

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ ຈົ່ງໃຫ້ການຮ່ວມມືກັບ ກະຊວງການຕ່າງປະເທດ ເພື່ອປະຕິບັດດຳລັດ ແລະ ຂໍ້ແນະນຳ ກ່ຽວກັບການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ມີປະສິດທິຜົນ, ທັງເປັນເຈົ້າການຮັບຜິດຊອບໂດຍກົງ ຕໍ່ການຈັດຕັ້ງປະຕິບັດໂຄງການ ແລະ ການເຄື່ອນໄຫວຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ ຢູ່ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນ.

### ມາດຕາ 31. ການຈັດຕັ້ງປະຕິບັດ

ມອບໃຫ້ ກະຊວງການຕ່າງປະເທດ ເປັນເຈົ້າການໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ໃຫ້ມີຄວາມສັກສິດ ແລະໄດ້ຮັບຜົນເປັນຢ່າງດີ.

ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ ແລະ ນະຄອນ ມີຫນ້າທີ່ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ຢ່າງເຂັ້ມງວດ.

### ມາດຕາ 32. ຜົນສັກສິດ

ດຳລັດສະບັບນີ້ ປ່ຽນແທນດຳລັດ 71/ນຍ ລົງວັນທີ 20 ເມສາ 1998 ແລະ ມີຜົນສັກສິດຫລັງຈາກ ສາມສິບ ວັນ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ, ບົດບັນຍັດໃດທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ